

# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ ....................................................... 1

II. ການເຄື່ອນໄຫວຂອງການນຳ ຄະນະພົວພັນຕ່າງປະເທດສູນກາງພັກ ................................................ 5


**ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ**

**ເດືອນ ຕຸລາ 2024**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 21/10/2024, ກອງປະຊຸມສະໄໝສາມັນ ຄັ້ງທີ 8 ຂອງສະພາແຫ່ງຊາດຫວຽດນາມ ສະໄໝທີ 15 ໄດ້ຜ່ານມະຕິຕົກລົງຮັບຮອງການແຕ່ງຕັ້ງ ສະຫາຍ ເລືອງເກື່ອງ, ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳຄະນະເລຂາທິການສູນກາງພັກ ດຳລົງຕຳແໜ່ງປະທານປະເທດແຫ່ງ ສສ.ຫວຽດນາມ ຄົນໃໝ່; ໃນວັນທີ 25/10/2024, ສູນກາງພັກກອມມູນິດຫວຽດນາມ ແຕ່ງຕັ້ງ ສະຫາຍ ເຈີນ ເກິມ ຕູ໋, ກຳມະການກົມການເມືອງ, ເລຂາທິການສູນກາງພັກ, ປະທານຄະນະກຳມະການກວດກາສູນກາງພັກ ດຳລົງຕຳແໜ່ງເປັນຜູ້ປະຈຳການຄະນະເລຂາທິການສູນກາງພັກ (ຜູ້ໃໝ່), ທັງເປັນປະທານຄະນະກຳມະການກວດກາສູນກາງພັກ.

ວັນທີ 28/10/2024, ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ (ຄຕພ) ໄດ້ສະເຫຼີມສະຫຼອງ 75 ປີ ວັນສ້າງຕັ້ງ ຄຕພ ຫວຽດນາມ (1/11/1949 – 1/11/2024). ຊຶ່ງພິທີໄດ້ຍົກໃຫ້ເຫັນຜົນງານໃນໄລຍະ 75 ປີ ຜ່ານມາ ຂອງ ຄຕພ ຫວຽດນາມ, ໄດ້ກາຍເປັນໜຶ່ງໃນ 3 ເສົາຄໍ້າສຳຄັນຂອງການທູດຮອບດ້ານ ແລະ ທັນສະໄໝ, ປັດຈຸບັນ, ພັກກອມມູນິດຫວຽດນາມ ມີການພົວພັນກັບ 253 ພັກການເມືອງໃນ 115 ປະເທດ, ໃນນັ້ນມີ 100 ກວ່າ ພັກກຳອຳນາດ ແລະ ມີການພົວພັນກັບ 1.200 ອົງການຈັດຕັ້ງສາກົນ. ໃນໂອກາດນີ້, ສະຫາຍ ໂຕເລິມ, ເລຂາທິການໃຫຍ່ພັກກອມມູນິດຫວຽດນາມ ໄດ້ຊີ້ນຳໃຫ້ ຄຕພ ຫວຽດນາມ ປະຕິບັດ 2 ເປົ້າໝາຍຍຸດທະສາດ 100 ປີ ໃຫ້ສຳເລັດ; ຈັດຕັ້ງ ແລະ ເຂົ້າຮ່ວມການຮັກສາສັນຕິພາບ ແລະ ແກ້ໄຂບັນຫາທົ່ວໂລກ; ວຽກງານການຕ່າງປະເທດ ຕ້ອງສົມທົບກັບການປ້ອງກັນປະເທດ, ປ້ອງກັນຄວາມສະຫງົບ ແລະ ກໍ່ສ້າງບຸກຄະລາກອນການຕ່າງປະເທດຢ່າງໜັກແໜ້ນ.

ວັນທີ 14/10/2024, ສສ.ຫວຽດນາມ ແລະ ສປ.ຈີນ ອອກຖະແຫຼງການຮ່ວມ ສືບຕໍ່ລົງເລິກ ແລະ ຍົກສູງການພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານ, ມີວິໄສທັດຍາວນານ; ປະຕິບັດຄຳຂວັນ “ເພື່ອນບ້ານທີ່ເປັນເພື່ອນມິດ, ການຮ່ວມມືຮອບດ້ານ, ໝັ້ນຄົງຍາວນານ”, ບົນຈິດໃຈ “ບ້ານໃກ້ເຮືອນຄຽງທີ່ດີ, ເພື່ອນມິດທີ່ດີ, ສະຫາຍທີ່ດີ, ຄູ່ຮ່ວມມືທີ່ດີ”; ເພີ່ມຄວາມໄວ້ເນື້ອເຊື່ອໃຈດ້ານການເມືອງ; ການຮ່ວມມືດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ປະສານງານໃກ້ຊິດ-ແກ້ໄຂຂໍ້ຂັດແຍ່ງ; ຊຸກຍູ້ການສ້າງຄູ່ຮ່ວມຊາຕາກຳ ຫວຽດນາມ-ຈີນ; ຊຸກຍູ້ການເຊື່ອມຈອດຍຸດທະສາດພັດທະນາລະຫວ່າງສອງປະເທດ; ຊຸກຍູ້ບັນດາວິສາຫະກິດໃນຂົງເຂດກະສິກຳ ເຕັກໂນໂລຊີ, ພື້ນຖານໂຄງລ່າງ, ພະລັງງານສະອາດ, ເສດຖະກິດດີຈີຕອນ, ການພັດທະນາສີຂຽວ, ການປະຕິຮູບ ແລະ ຄຸ້ມຄອງລັດວິສາຫະກິດ, ຊຸກຍູ້ເຊິ່ງກັນແລະກັນໃນເວທີຫຼາຍຝ່າຍ; ຊຸກຍູ້ຂໍ້ລິເລີ່ມກໍ່ສ້າງ “ 5 ເສົາຄໍ້າ ” ສັນຕິພາບ, ຄວາມໝັ້ນຄົງ, ຄວາມຈະເລີນຮຸ່ງເຮືອງ, ສວຍງາມ ແລະ ມິດຕະພາບ. ເຫັນດີສືບຕໍ່ປະຕິບັດ DOC, COC ແລະ ກົດໝາຍສາກົນວ່າດ້ວຍທະເລ ປີ 1982; ສອງຝ່າຍໄດ້ລົງນາມໃນຂົງເຂດການຄົມມະນາຄົມ, ພາສີ, ພົນລະເຮືອນ, ການສຶກສາ, ການຄ້າກະສິກຳ, ສື່ມວນຊົນ ແລະ ທະນາຄານ.

### 2) ພັກກອມມູນິດຈີນ

ວັນທີ 22/10/2024, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປ.ລາວ ໄດ້ພົບປະ ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດ ແຫ່ງ ສປ.ຈີນ ເພື່ອທົບທວນການຈັດຕັ້ງປະຕິບັດແຜນການຮ່ວມມືຜ່ານມາ ເຫັນວ່າໄດ້ມີຄວາມກ້າວໜ້າ ເປັນແບບຢ່າງການສ້າງຄູ່ຮ່ວມຊາຕາກຳຢ່າງສະເໝີຕົ້ນສະເໝີປາຍ, ບໍ່ວ່າສະພາບການສາກົນຈະປ່ຽນແປງໄປແນວໃດກໍຕາມ ສອງຝ່າຍເປັນເພື່ອນມິດ ແລະ ຄູ່ຮ່ວມມືທີ່ດີໝັ້ນຄົງ, ມີຄວາມໄວ້ເນື້ອເຊື່ອໃຈກັນດ້ານຍຸດທະສາດ, ຊຸກຍູ້ໃຫ້ການສ້າງຄູ່ຮ່ວມຊາຕາກຳຈີນ-ລາວ ກ້າວສູ່ລວງເລິກດ້ວຍຜົນງານຕົວຈິງຢ່າງຕໍ່ເນື່ອງ. ສອງຝ່າຍ ເຫັນດີເພີ່ມທະວີການແລກປ່ຽນ ແລະ ຖອດຖອນບົດຮຽນເຊິ່ງກັນແລະກັນ, ສືບຕໍ່ສະໜັບສະໜູນເຊິ່ງກັນ ແລະ ກັນໃນຜົນປະໂຫຍດຕົ້ນຕໍຂອງກັນແລະກັນ.

ວັນທີ 28/10/2024, ກົມການເມືອງສູນກາງພັກຄອມມູນິດຈີນ ໄດ້ຈັດກອງປະຊຸມວຽກງານກວດກາ ຮອບ 3 ຂອງ ສູນກາງພັກຄອມມູນິດຈີນສະໄໝທີ 20 ໂດຍການເປັນປະທານຂອງ ສະຫາຍ ສີຈິ້ນຜິງ ເລຂາທິການໃຫຍ່ຄະນະກຳມະການສູນກາງພັກຄອມມູນິດຈີນ. ກອງປະຊຸມໄດ້ເນັ້ນໜັກວ່າ: ຄະນະພັກທຸກຂັ້ນຕ້ອງຕັ້ງໃຈປະຕິບັດແຜນການກອງປະຊຸມຄົບຄະນະຄັ້ງທີ 3 ຂອງຄະນະກຳມະການສູນກາງພັກຄອມມູນິດຈີນສະໄໝທີ XX, ເພີ່ມທະວີການກໍ່ສ້າງຄະນະນຳທຸກຂັ້ນ, ປະຕິບັດລະບອບລວມສູນປະຊາທິປະໄຕຢ່າງເຂັ້ມງວດ, ຕ້ານການສໍ້ລາດບັງຫຼວງຈົນເຖິງທີ່ສຸດໃຫ້ມີປະສິດທິຜົນຍາວນານ. ໃນວັນດຽວກັນນີ້, ກົມການເມືອງສູນກາງພັກຄອມມູນິດຈີນ ໄດ້ຈັດການຮ່ຳຮຽນລວມໝູ່ຄັ້ງທີ 17 ຊຶ່ງສະຫາຍ ສີ ຈິ້ນຜິງ ເນັ້ນໜັກໃຫ້ມຸ່ງໝັ້ນໃນເປົ້າໝາຍຍຸດທະສາດການສ້າງປະເທດເຂັ້ມແຂງດ້ານວັດທະນະທຳໃຫ້ສຳເລັດຜົນໃນປີ 2035, ຍຶດໝັ້ນ ລັດທິມາກ ເຊິ່ງເປັນແນວຄິດຊີ້ນຳຂັ້ນພື້ນຖານ, ພັດທະນາວັດທະນະທຳສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ ໃຫ້ໄປຕາມກະແສການພັດທະນາເຕັກໂນໂລຊີຂໍ້ມູນຂ່າວສານ, ມີຄວາມສາມາດນຳພາແນວຄິດ, ຄວາມສາມັກຄີໜັກແໜ້ນ, ມີບົດບາດໃນສາກົນທີ່ເຂັ້ມແຂງ, ເສີມສ້າງກຳລັງໃຈໃຫ້ປະຊາຊົນ, ຮັດແໜ້ນພື້ນຖານດ້ານວັດທະນະທຳເພື່ອສ້າງສາປະເທດຊາດໃຫ້ເຂັ້ມແຂງ.

**3) ພັກການເມືອງຍີ່ປຸ່ນ.**

ການເລືອກຕັ້ງທົ່ວໄປຂອງຍີ່ປຸ່ນ ໄດ້ຈັດຂຶ້ນໃນວັນທີ 27/10/2024 ຜ່ານມາ, ຊຶ່ງ ພັກເສລີປະຊາທິປະໄຕ (LDP), ພັກລັດຖະບານປັດຈຸບັນ ໄດ້ຮັບ 191 ບ່ອນນັ່ງ, ຫຼຸດລົງ 56 ບ່ອນນັ່ງ; ສ່ວນພັກ Komeito ພັກຮ່ວມລັດຖະບານ ໄດ້ຮັບ 24 ບ່ອນນັ່ງ ຫຼຸດລົງ 8 ບ່ອນນັ່ງ, ຖ້າທຽບໃສ່ການເລືອກຕັ້ງໃນປີ 2021; ລວມກັນແລ້ວພັກຮ່ວມລັດຖະບານ ມີ 215 ບ່ອນນັ່ງ ຈາກທັງໝົດ 465 ບ່ອນນັ່ງໃນສະພາຕ່ຳ, ຕ້ອງການອີກ 18 ບ່ອນນັ່ງ, ຈຶ່ງຈະສາມາດຈັດຕັ້ງລັດຖະບານ; ໃນຂະນະທີ່ພັກຝ່າຍຄ້ານ ນຳໂດຍ ພັກປະຊາທິປະໄຕ ຕາມລັດຖະທຳມະນູນຍີ່ປຸ່ນ (CDP) ໄດ້ 235 ບ່ອນນັ່ງ; ຊຶ່ງເປັນຄັ້ງທຳອິດໃນຮອບ 15 ປີ ທີ່ພັກລັດຖະບານສູນເສຍການຄອງສຽງສ່ວນຫຼາຍໃນສະພາຕ່ຳ. ທ່ານ Shigeru Ishiba, ນາຍົກລັດຖະມົນຕີຍີ່ປຸ່ນ ທີ່ໄດ້ຮັບຕຳແໜ່ງ ໃນວັນທີ 1/10/2024 ຜ່ານມາ, ຈະຍັງດຳລົງຕຳແໜ່ງຕໍ່ໄປ ແລະ ຈະຮັກສາລັດຖະບານປະສົມໄວ້ເພື່ອບໍ່ໃຫ້ການເມືອງພາຍໃນປະເທດຢຸດສະງັກ.

**4) ການເລືອກຕັ້ງລັດຖະສະພາຊອກຊີ.**

ການເລືອກຕັ້ງລັດຖະສະພາຂອງ ຊອກຊີ ຈັດຂຶ້ນໃນວັນທີ 26/10/2024, ຊຶ່ງແມ່ນພັກ Georgian Dream, ພັກຂອງລັດຖະບານປັດຈຸບັນ ໄດ້ຮັບຄະແນນສຽງ 54%, ໄດ້ 90 ບ່ອນນັ່ງ, ໃນຈານວນບ່ອນນັ່ງທັງໝົດ 150 ບ່ອນນັ່ງ, ຊຶ່ງຈະເຮັດໃຫ້ພັກ Georgian Dream ສາມາດຈັດຕັ້ງລະຖະບານຊຸດຕໍ່ໄປໄດ້. ໃນຂະນະທີ່ ພັກຝ່າຍຄ້ານຕ່າງໆ ໄດ້ຮັບຄະແນນສຽງ ລະຫວ່າງ 3% - 11% ແລະ ປະກາດຮ່ວມກັບບາງປະເທດ ຕາເວັນຕົກປະຕິເສດທີ່ຈະຮັບຮູ້ຜົນການເລືອກຕັ້ງ ໂດຍກ່າວວ່າ ມີການສໍ້ໂກງການເລືອກຕັ້ງ ແລະ ມີການລວມຊຸມນຸມປະທ້ວງບໍລິເວນນອກອາຄານລັດຖະສະພາໃນນະຄອນຫຼວງ Tbilisi ເມື່ອວັນທີ 28/10/2024. ອາເມຣິກາ ຖະແຫຼງວ່າການເລືອກຕັ້ງມີການຊື້ສຽງ ແລະ ມີການຂົ່ມຂູ່ຜູ້ມີສິດເລືອກຕັ້ງ ແລະ ກ່າວວ່ານະໂຍບາຍຂອງຊອກຊີອາດຂັດຂວາງຄວາມປາຖະໜາຂອງປະເທດທີ່ຈະເຂົ້າຮ່ວມອີຢູ. ຊຶ່ງໃນປີ 2024, ລັດຖະສະພາຊອກຊີ ໄດ້ຮັບຮອງເອົາກົດໝາຍ ໃຫ້ຂຶ້ນທະບຽນ NGOs ວ່າເປັນສາຍລັບຕ່າງຊາດ, ຊຶ່ງໄດ້ກໍ່ໃຫ້ເກີດການປະທ້ວງຫຼາຍຄັ້ງ.

## 2. ຂ່າວພົ້ນເດັ່ນໃນພາກພື້ນ ແລະ ສາກົນ

### 1) ສະພາບການໃນພາກພື້ນອາຊີ-ປາຊີຟິກ

ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44, 45 ແລະ ບັນດາກອງປະຊຸມປິ່ນອ້ອມທັງໝົດ 16 ກອງປະຊຸມ ໄດ້ດຳເນີນ ແຕ່ວັນທີ 9-11/10/2024 ໂດຍການເປັນເຈົ້າພາບ ແລະ ປະທານໝູນວຽນຂອງ ສປປ ລາວ ພາຍໃຕ້ຄຳຂວັນ “ເພີ່ມທະວີການເຊື່ອມຈອດ ແລະ ຄວາມເຂັ້ມແຂງອາຊຽນ”. ເຊິ່ງໄດ້ຍົກຜົນສຳເລັດການປະຕິບັດວິໄສທັດປະຊາຄົມອາຊຽນ 2025 ແລະ ຜົນສຳເລັດຂອງການຈັດຕັ້ງປະຕິບັດ 9 ຂົງເຂດບຸລິມະສິດ; ໄດ້ຮັບຮອງ ແລະ ຮັບຊາບເອກະສານຫລາຍກວ່າ 90 ສະບັບ ເພື່ອຊຸກຍູ້ການຈັດຕັ້ງປະຕິບັດວິໄສທັດປະຊາຄົມອາຊຽນ 2045 ໃຫ້ເປັນປະຊາຄົມທີ່ເຂັ້ມແຂງ, ມີນະວັດຕະກຳ, ຄ່ອງແຄ້ວ ແລະ ມີປະຊາຊົນເປັນແກນກາງ ແລະ ເພື່ອຄວາມຄືບໜ້າ ການກະກຽມຄວາມພ້ອມສຳລັບ ການເປັນສະມາຊິກສົມບູນອາຊຽນຂອງ ຕີມໍແລັດສະເຕ ແລະ ການເສີມຂະຫຍາຍການ

ພົວພັນຮ່ວມມືກັບພາຍນອກ. ສປປ ລາວ ຈະສືບຕໍ່ເປັນປະທານອາຊຽນ ໄປຈົນຮອດວັນທີ 31/12/2024 ແລະ ມາເລເຊຍ ຈະເລີ່ມເປັນປະທານອາຊຽນແຕ່ວັນທີ 1 ມັງກອນ - 31 ທັນວາ 2025.

ກອງປະຊຸມ ສະພາຂອງຜູ້ນໍາລັດຖະບານ ອົງການຮ່ວມມືຊຽງໄຮ້ (SCO) ຄັ້ງທີ 23 ຈັດຂຶ້ນ ໃນລະຫວ່າງວັນທີ 15-16/10/2024, ທີ່ນະຄອນຫຼວງ Islamabad, ປະເທດປາກິດສະຖານ ໂດຍມີ ຜູ້ນໍາ 10 ປະເທດສະມາຊິກເຂົ້າຮ່ວມຄື: ເບລາຣຸດຊີ, ຈີນ, ອິນເດຍ, ອີຣານ, ກາຊັກສະຖານ, ກຽກກິດສະຖານ, ປາກິດສະຖານ ຣັດເຊຍ, ຕາຈິກິດສະຖານ ແລະ ອຸດເບກິດສະຖານ; ແລະ ມີປະເທດມົງໂກລີ ເຂົ້າຮ່ວມໃນນາມປະເທດສັງເກດການ ໂດຍທີ່ປະຊຸມໄດ້ອອກຖະແຫຼງການ ເສີມຂະຫຍາຍການຮ່ວມມື ໃນດ້ານຕ່າງໆ ເຊັ່ນ: ການຄ້າ, ເສດຖະກິດ, ການລົງທຶນ, ວັດທະນະທໍາ ແລະ ມະນຸດສະທໍາ; ໃຫ້ຄວາມສໍາຄັນໃນການພັດທະນາທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ (SME) ທີ່ມີຄວາມສໍາຄັນຕໍ່ການກະຕຸ້ນເສດຖະກິດ ແລະ ການສ້າງວຽກເຮັດງານທໍາ ໃຫ້ແກ່ປະຊາຊົນ; ທີ່ປະຊຸມຍັງໄດ້ປຶກສາຫາລື ກ່ຽວກັບການສ້າງທະນາຄານ ພັດທະນາ SCO; ກອງທຶນພັດທະນາ SCO ແລະ ກອງທຶນລົງທຶນ SCO.

ກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງປະເທດອາຊຽນ (AIPA) ຄັ້ງທີ 45 ໄດ້ຈັດຂຶ້ນທີ່ ສປປ ລາວ ໃນລະຫວ່າງວັນທີ 17-21/10/2024 ພາຍໃຕ້ຫົວຂໍ້ “ບົດບາດຂອງລັດຖະສະພາໃນການຊຸກຍູ້ການເຊື່ອມຈອດ ແລະ ການເຕີບໂຕແບບກວມລວມຂອງອາຊຽນ” ຊຶ່ງມີຄະນະຜູ້ແທນ ຈາກລັດຖະສະພາສະມາຊິກໄອປາ 10 ປະເທດ ລວມທັງໝົດປະມານ 600 ທ່ານ ເຂົ້າຮ່ວມ. ກອງປະຊຸມຄັ້ງນີ້ ໄດ້ມີກອງປະຊຸມປິ່ນອ້ອມທັງໝົດ 11 ກອງປະຊຸມ ແລະ ໄດ້ຢໍ້າຄືນຄວາມໝາຍໝັ້ນ ໃນການຊຸກຍູ້ການເຊື່ອມຈອດ ແລະ ການເຕີບໂຕແບບກວມລວມ ຂອງອາຊຽນ; ໄດ້ພິຈາລະນາ ແລະ ຮັບຮອງເອົາມະຕິທັງໝົດ 37 ສະບັບ. ໃນນີ້, ຂົງເຂດການເມືອງ 4 ສະບັບ, ຂົງເຂດວຽກງານເສດຖະກິດ 8 ສະບັບ, ຂົງເຂດວຽກງານສັງຄົມ 5 ສະບັບ, ວຽກງານເພດຍິງ 2 ສະບັບ, ວຽກງານຊາວໜຸ່ມມີ 3 ສະບັບ ແລະ ວຽກງານຈັດຕັ້ງພາຍໃນໄອປາ 15 ສະບັບ ແລະ ໄດ້ຮັບຮອງຖະແຫຼງການຮ່ວມກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 45 ແລະ ຮັບຮອງເອົາປະເທດມາເລເຊຍເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 46 ໃນປີ 2025.

ກອງປະຊຸມສຸດຍອດກຸ່ມ BRICS ຄັ້ງທີ 16 ຈັດຂຶ້ນທີ່ເມືອງ Kazan, ສ.ຣັດເຊຍ ລະຫວ່າງວັນທີ 22-24/10/ 2024 ເພື່ອພົບປະຫາລືລະດັບສູງຂອບການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ, ພາຍໃຕ້ຄໍາຂວັນ “ເສີມຂະຫຍາຍລັດທິຫຼາຍຝ່າຍເພື່ອການພັດທະນາ ແລະຄວາມໝັ້ນຄົງຂອງໂລກທີ່ເທົ່າທຽມ (Strengthening Multilateralism for Just Global Development and Security)” ມີຄະນະຜູ້ແທນ 36 ຄະນະເຂົ້າຮ່ວມ ໃນນັ້ນ ຂັ້ນປະມຸກລັດ 20 ກວ່າຄະນະ ເຊັ່ນ: ປະທານປະເທດຈີນ, ອາຟຣິກາໃຕ້, ເອຢິບ, ອີຣານ, ອາແຊກໄບຊານ, ປະທານປະເທດ ແຫ່ງ ສປປ ລາວ, ນາຍົກລັດຖະມົນຕີອິນເດຍ, ນາຍົກລັດຖະມົນຕີ ສສ ຫວຽດນາມ; ມີ 6 ຄະນະຈາກອົງການຈັດຕັ້ງສາກົນ ລວມທັງ ເຂລາທິການໃຫຍ່ UN, ລວມທັງໝົດ 30,000 ກວ່າຄົນ. ໃນໂອກາດດັ່ງກ່າວໄດ້ມີການພົບປະນອກຮອບສອງຝ່າຍລະຫວ່າງຜູ້ນໍາປະເທດຕ່າງໆທີ່ເຂົ້າຮ່ວມ. ກອງປະຊຸມຄັ້ງນີ້, ອອກຖະແຫຼງການຮ່ວມມີເນື້ອໃນສໍາຄັນລະບຸເຖິງການພັດທະນາອົງກອນ; ການແກ້ໄຂຂໍ້ຂັດແຍ່ງຕ່າງໆໃນພາກພື້ນ ແລະ ສາກົນ. ປັດຈຸບັນ, ສະມາຊິກກຸ່ມ BRICS ປະກອບດ້ວຍ 9 ປະເທດ ຄື: ບຣາຊິນ, ຣັດເຊຍ, ອິນເດຍ, ຈີນ, ອາຟຣິກາໃຕ້, ເອທີໂອປີ, ອີຢິບ, ອີຣານ ແລະ ອາເມຣັດ ອາຣັບ ກວມເອົາປະມານ 46% ຂອງປະຊາກອນໂລກ ແລະ ຫຼາຍກວ່າ 36% ຂອງ GDP ໂລກ. ປັດຈຸບັນ ມີ 13 ປະເທດ ໄດ້ຍື່ນສະໝັກເຂົ້າຮ່ວມຢ່າງເປັນທາງການ ໃນນັ້ນມີ ກູບາ, ປະເທດສະມາຊິກອາຊຽນ ຫວຽດນາມ, ອິນໂດເນເຊຍ, ມາເລເຊຍ ແລະ ໄທ. ແລະ ອີກ 23 ປະເທດ ສະແດງຄວາມສົນໃຈເຂົ້າຮ່ວມ.

**2) ສະພາບການເອີຣົບ-ອາເມຣິກາ**

ໃນວັນທີ 10/10/2024, ຣັດເຊຍ ໄດ້ຈັດກອງປະຊຸມຂອງສະພາປະມຸກລັດເອກກະລາດ (Commonwealth of Independent States: CIS) ຊຶ່ງມີ 9 ປະເທດເຂົ້າຮ່ວມ (8 ປະທດ ແມ່ນສະມາຊິກ CIS ແລະ 1 ປະເທດສັງເກດການ)( Russia, Armenia, Azerbaijan, Belarus, Kazakhstan, Kyrgyzstan, Tajikistan, Uzbekistan ແລະ Turkmenistan ໃນນາມປະເທດສັງເກດການ). ກອງປະຊຸມ, ໄດ້ປຶກສາຫາລືກ່ຽວກັບການເພີ່ມທະວີການຮ່ວມມື ; ການຟື້ນຟູອົງການຈັດຕັ້ງ CIS, ຊຶ່ງຣັດເຊຍ ໄດ້ກໍານົດໃຫ້ CIS ແມ່ນບຸລິມະສິດອັນດັບໜຶ່ງຂອງ

ນະໂຍບາຍການຕ່າງປະເທດຂອງຣັດເຊຍ, ເປັນປະເທດບ້ານໃກ້ເຮືອນຄຽງ, ເພື່ອນມິດ ແລະ ຄູ່ຮ່ວມມືຍຸດທະສາດ. ບັນດາສະມາຊິກ CIS ໄດ້ຢືນຢັນການສືບຕໍ່ຮັກສາສາຍພົວພັນທາງດ້ານການເມືອງ, ເສດຖະກິດ, ຄວາມໝັ້ນຄົງຂອງຊາດຂອງບັນດາປະເທດສະມາຊິກ ແລະ ກອງປະຊຸມໄດ້ຕີລາຄາວ່າ: ອາເມຣິກາ ແລະ ພັນທະມິດຕາເວັນຕົກ ຍັງສືບຕໍ່ແຊກແຊງແບ່ງແຍກການພົວພັນບັນດາສະມາຊິກ CIS ແຕ່ຄວາມພະຍາຍາມຂອງຕາເວັນຕົກແມ່ນປາລາໄຊ.

**ສະຖານະການໃນອູແກຣນ:** ຍັງສືບຕໍ່ປະທະກັນໄປມາລະຫວ່າງອູແກຣນ ແລະ ຣັດເຊຍ ໃນພາກຕາເວັນອອກ, ພາກເໜືອຂອງອູແກຣນ ແລະ ແຄວ້ນຄຸດຂອງຣັດເຊຍ, ຊຶ່ງຣັດເຊຍ ສາມາດຍຶດເມືອງຍຸດທະສາດສຳຄັນຂອງອູແກຣນ ໄດ້ເພີ່ມຂຶ້ນ ແລະ ຍຶດບັນດາບ້ານໃນແຄວ້ນຄຸດ ຈາກທະຫານອູແກຣນ ໄດ້ເກືອບໝົດແລ້ວ. ວັນທີ 7/10/2024, ຣັດເຊຍໄດ້ກ່າວວ່າ ຈະຮອບຮວມຫຼັກຖານທີ່ອູແກຣນ ນຳໃຊ້ສານເຄມີທີ່ເປັນພິດຕໍ່ທະຫານ ແລະ ພົນລະເຮືອນຂອງຣັດເຊຍ ແລະຈະນຳຕົວຜູ້ກະທຳຜິດດັ່ງກ່າວມາລົງໂທດຕາມກົດໝາຍ; ພ້ອມກັນນັ້ນ, ຣັດເຊຍ ກ່າວວ່າ: ເຫັນດີຈະຢຸດຕິຄວາມຂັດແຍ່ງໃນອູແກຣນ ດ້ວຍວິທີທາງການທູດ ທີ່ຈະເປັນການແກ້ໄຂສາເຫດທີ່ແທ້ຈິງຂອງບັນຫາ, ແຕ່ອູແກຣນ ແລະ ບັນດາຜູ້ສະໜັບສະໜູນຕາເວັນຕົກຕ່າງກໍບໍ່ເປີດກວ້າງຕໍ່ການແກ້ໄຂບັນຫາ. ຣັດເຊຍ ເນັ້ນຢໍ້າ, ຕາເວັນຕົກ ຕ້ອງຢຸດສົ່ງອາວຸດໃຫ້ອູແກຣນ ແລະ ອູແກຣນ ຄວນຢຸດຕິການສູ້ຮົບ ແລະ ກັບຄືນສູ່ສະຖານະເປັນກາງ, ບໍ່ເຂົ້າຮ່ວມກຸ່ມ ແລະ ບໍ່ຄອບຄອງອາວຸດນິວເຄລຍ, ເຄົາລົບສິດ ແລະ ເສລີພາບຂອງພົນລະເມືອງຣັດເຊຍໃນອູແກຣນ. ສ່ວນທ່ານ Vladimir Zelensky, ປະທານາທິບໍດີອູແກຣນ ໄດ້ນຳສະເໜີ “ແຜນແຫ່ງໄຊຊະນະ” ຕໍ່ລັດຖະສະພາອູແກຣນ, ໃນນັ້ນໄດ້ຮ້ອງຂໍໃຫ້ອູແກຣນໄດ້ຮັບເຊີນເຂົ້າຮ່ວມນາໂຕ້ທັນທີ, ຊຶ່ງຈະເປັນທິດທາງຊ່ວຍຢຸດຕິຄວາມຂັດແຍ່ງ ກັບຣັດເຊຍໄດ້ໄວຂຶ້ນ. ຂະນະທີ່ຣັດເຊຍ ກ່າວວ່າ ອູແກຣນ ກຳລັງຊຸກຍູ້ໃຫ້ສະມາຊິກນາໂຕ້ ເຂົ້າສູ່ຄວາມຂັດແຍ່ງໂດຍກົງກັບຣັດເຊຍ ນຳໃຊ້ອາວຸດພິໄສໄກຈາກປະເທດສະມາຊິກນາໂຕ້ໂຈມຕີຣັດເຊຍ. ທ່ານ Zelensky ຍັງກ່າວຫາ ສປປ ເກົາຫຼີ ກຽມສົ່ງທະຫານ 10.000 ຄົນ ເພື່ອໄປຊ່ວຍຣັດເຊຍໂຈມຕີອູແກຣນ. ອາເມຣິກາ ກ່າວໃນວັນທີ 28/10/2024 ວ່າ ອາເມຣິກາ ຈະອະນຸຍາດໃຫ້ອູແກຣນ ນຳໃຊ້ອາວຸດຂອງອາເມຣິກາ ແບບບໍ່ມີຂໍ້ຈຳກັດ ຖ້າຫາກ ສປປ ເກົາຫຼີ ເຂົ້າຮ່ວມຂໍ້ຂັດແຍ່ງດັ່ງກ່າວ ແລະ ນາໂຕ້ ໄດ້ກ່າວວ່າ ໜ່ວຍທະຫານຂອງ ສປປ ເກົາຫຼີ ໄດ້ຖືກສົ່ງໄປທີ່ພາກພື້ນ Kursk ໃນຣັດເຊຍແລ້ວ. ຣັດເຊຍກ່າວວ່າ ການຮ່ວມມືທາງທະຫານເປັນກິດຈະການພາຍໃນລະຫວ່າງຣັດເຊຍ ແລະ ສປປ ເກົາຫຼີ. ອາເມຣິກາ ແລະ ຊູແອັດ ໄດ້ຝຶກຊ້ອມຮົບທາງອາກາດໃນນ່ານຟ້າຂອງສະວີດແຕ່ວັນທີ 28-30/10/2024. ຂະນະດຽວກັນ, ຣັດເຊຍ ແລະ ອູແກຣນ ໄດ້ມີການແລກປ່ຽນຊະເລີຍເສິກ ຝ່າຍລະ 95 ຄົນ ໃນວັນທີ 19/10/2024 ຜ່ານມາ. ບາງປະເທດສະມາຊິກເອີຣົບຕາເວັນຕົກ ສືບຕໍ່ໃຫ້ການຊ່ວຍເຫຼືອອູແກຣນ; ໂຮນລັງ ໄດ້ສົ່ງເຮືອບິນ F-16 ຊຸດທາອິດໃຫ້ອູແກຣນ ຈຳນວນທັງໝົດ 24 ລຳ ແລະ ຈະລົງທຶນຈຳນວນ 400 ລ້ານເອີໂຣ ເຂົ້າໃນການພັດທະນາໂດຣນໃຫ້ກອງທັບອູແກຣນ. ນັບແຕ່ປີ 2022 ເປັນຕົ້ນມາ ໂຮນລັງ ໄດ້ໃຫ້ການຊ່ວຍເຫຼືອດ້ານການທະຫານແກ່ອູແກຣນ ມູນຄ່າຫຼາຍກວ່າ 3,76 ຕື້ເອີໂຣ ແລະ ຈະສົ່ງລູກສອນໄຟປ້ອງກັນໄພທາງອາກາດ Patriot ໃຫ້ຕື່ມອີກ. ຂະນະທີ່, ນາໂຕ້ ໄດ້ຝຶກຊ້ອມຮົບດ້ານນິວເຄລຍເພື່ອເປັນການສະໜັບສະໜູນໂດຍກົງຕໍ່ອູແກຣນ ມີ 13 ປະເທດ ເຂົ້າຮ່ວມ, ໃສ່ຊື່ວ່າ “Steadfast Noon” ທີ່ເລີ່ມຂຶ້ນໃນວັນທີ 14/10/ 2024 ມີທະຫານເຂົ້າຮ່ວມ 2.000 ຄົນ, ເຮືອບິນຫຼາຍກວ່າ 60 ລຳ ໂດຍມີການຝຶກຊ້ອມຕິດຕັ້ງອາວຸດທີ່ ອາເມຣິກາ ສະໜອງໃຫ້ ພາຍໃຕ້ຂໍ້ຕົກລົງການແບ່ງປັນອາວຸດນິວເຄລຍຂອງກຸ່ມນາໂຕ້.

### 3. ຂໍ້ຂັດແຍ່ງຢູ່ຕາເວັນອອກກາງ

ສະພາບຕາເວັນອອກກາງນັບມື້ທະວີຄວາມຮຸນແຮງ, ອິດສະຣາແອນ ຍັງໂຈມຕີປິດລ້ອມເຂດກາຊາ, ຖິ້ມລະເບີດໃສ່ໂຮງໝໍ ແລະ ເຂດອື່ນໆໃນກາຊາ. ເຮັດໃຫ້ມີປະຊາຊົນເສຍຊີວິດເພີ່ມຂຶ້ນຢ່າງຕໍ່ເນື່ອງ; ຂັດຂວາງການຊ່ວຍເຫຼືອດ້ານມະນຸດສະທຳບໍ່ໃຫ້ເຂົ້າເຖິງເຂດດັ່ງກ່າວ ເຮັດໃຫ້ປະຊາຊົນປາແລັດສະຕິນ 200.000 ຄົນ ຂາດແຄນອາຫານ, ນໍ້າ ດື່ມ ແລະຢາ. ຂະນະທີ່ ຜູ້ອຳນວຍການໃຫຍ່ ອົງການອະນາໄມໂລກ ຮຽກຮ້ອງໃຫ້ອິດສະຣາແອນ ປ່ອຍໃຫ້ບັນດາອົງການຊ່ວຍເຫຼືອດ້ານມະນຸດສະທຳ ເຂົ້າເຖິງເຂດກາຊາໄດ້. ອິດສະຣາແອນ ແລະ ກຸ່ມຮິດບອນເລາະ ໃນລີບັງ ສືບຕໍ່ປະທະກັນ, ຊຶ່ງໃນວັນທີ 7/10/2024 ກຸ່ມຮິດບອນເລາະ ໄດ້ຍິງລູກສອນໄຟໃສ່ເມືອງ Karmiel ທາງພາກເໜືອຂອງອິດສະຣາແອນ ແລະ ໂຈມຕີດ້ວຍລູກສອນໄຟພິໄສໄກ ໃສ່ໜ່ວຍງານສືບຂ່າວລັບທາງທະຫານຂອງອິດສະຣາແອນ ທີ່ຕັ້ງຢູ່ຊານເມືອງ Tel Aviv, ແຕ່ອິດສະຣາແອນ ກ່າວວ່າ ສາມາດຍິງສະກັດໄວ້ໄດ້ຈຳນວນໜຶ່ງ. ສ່ວນອິດສະຣາແອນ ໄດ້ໂຈມຕີ ໃສ່ພາກໃຕ້ຂອງ

ນະຄອນຫຼວງ Beirut ຂອງລີບັງ. ວັນທີ 10/10/2024, ອິສຣາແອນ ໄດ້ໂຈມຕີທາງອາກາດໃສ່ສະຖານທີ່ສອງແຫ່ງຢູ່ໃຈກາງນະຄອນຫຼວງເບຣຸດ ຂອງລີບັງ, ເຮັດໃຫ້ມີຜູ້ເສຍຊີວິດ 22 ຄົນ ແລະ ບາດເຈັບ 100 ກວ່າຄົນ, ເປັນຄັ້ງທີ 3 ທີ່ອິດສະຣາແອນ ໂຈມຕີໃຈກາງເມືອງ Beirut ທີ່ເຮັດໃຫ້ມີຜູ້ເສຍຊີວິດຈໍານວນຫຼາຍ. ກອງກໍາລັງປ້ອງກັນປະເທດອິດສະຣາແອນ (IDF) ຍັງໄດ້ໂຈມຕີ "ເຂດເຄື່ອນໄຫວຂອງກຸ່ມ Hezbollah" ໃກ້ກັບສໍານັກງານໃຫຍ່ຂອງກໍາລັງຮັກສາສັນຕິພາບຊົ່ວຄາວຂອງອົງການສະຫະປະຊາຊາດ (UNIFIL) ຢູ່ພາກໃຕ້ລີບັງ, ເຮັດໃຫ້ພະນັກງານອົງການສະຫະປະຊາຊາດ 2 ຄົນໄດ້ຮັບບາດເຈັບ. ສະພາເອີຣົບ ໄດ້ປະນາມວ່າ ເປັນການກະທໍາທີ່ບໍ່ສາມາດຍອມຮັບໄດ້, ຮຽກຮ້ອງໃຫ້ ອິດສະຣາແອນ ແລະ ທຸກຝ່າຍເຄົາລົບກົດໝາຍມະນຸດສະທໍາສາກົນ, ແຕ່ອິດສະຣາແອນ ເພີກເສີຍຕໍ່ການປະນາມທຸກຢ່າງ ແລະ ໄດ້ຮຽກຮ້ອງໃຫ້ ສປຊ ຍົກຍ້າຍກໍາລັງຮັກສາສັນຕິພາບ UNIFIL ອອກຈາກເຂດສົງຄາມຢູ່ລີບັງ. ກຸ່ມຮູຕີ ໃນເຢເມນ ໄດ້ຍິງລູກສອນໄຟພີໄສໄກໂຈມຕີເປົ້າໝາຍທາງການທະຫານ 2 ແຫ່ງ ໃນເມືອງ Tel Aviv ຂອງອິດສະຣາແອນ. ໃນວັນທີ 26/10/2024, ອິດສະຣາແອນ ໄດ້ຫຼອນໂຈມຕີອີຣານ ທາງອາກາດເຮັດໃຫ້ມີຜູ້ເສຍຊີວິດ 10 ຄົນ, ຫຼາຍປະເທດໄດ້ກ່າວປະນາມອິດສະຣາແອນວ່າ: ເປັນການລະເມີດອະທິປະໄຕຂອງອີຣານ, ລະເມີດກົດໝາຍສາກົນ, ຮຽກຮ້ອງໃຫ້ສະພາຄວາມໝັ້ນຄົງ ຂອງ UN ປະຕິບັດຕາມຄວາມຮັບຜິດຊອບຂອງຕົນ ເພື່ອສະກັດກັ້ນການເຄື່ອນໄຫວການທະຫານຂອງອິດສະຣາແອນ ບໍ່ໃຫ້ຂະຫຍາຍເປັນວົງກວ້າງ.

## II. ການເຄືອນໄຫວຂອງການນໍາ ຄະນະພົວພັນຕ່າງປະເທດສູນກາງພັກ

### 1) ຄຕພ ປາຖະກະຖາວັນສໍາຄັນຂອງຊາດ ແລະ ປະກາດການຈັດຕັ້ງ




ໃນວັນທີ 11/10/2024, ຄະນະພົວພັນຕ່າງປະເທດສູນກາງພັກ(ຄຕພ) ໄດ້ຈັດກອງປະຊຸມປະຖະກະຖາວັນປະກາດເອກະລາດ ແລະ ວັນການທູດລາວ ຄົບຮອບ 79 ປີ (12/10/1945-12/10/2024); ພາຍໃຕ້ການເປັນປະທານ ແລະ ໃຫ້ກຽດບັນຍາຍຂອງ ສະຫາຍ ທອງສະຫວັນ ພົມວິຫານ, ຫົວໜ້າ ຄຕພ ໄດ້ທວນຄືນມູນເຊື້ອອັນພິລະອາດຫານໃນຂະບວນການຕໍ່ສູ້ຂອງ ປະຊາຊົນລາວ ຕ້ານການຮຸກຮານຂອງ ຈັກກະພັດຕ່າງດ້າວ ພາຍໃຕ້ການນໍາພາຂອງວິລະຊົນ, ວິລະບູລຸດຜູ້ເກັ່ງກ້າ ໃນໄລຍະທີ່ບໍ່ທັນມີພັກນໍາພາ ແລະ ການຕໍ່ສູ້ກູ້ຊາດຕ້ານພວກລ່າເມືອງຂຶ້ນ ພາຍໃຕ້ການນໍາພາຂອງພັກກອມມູນິດອິນດູຈີນ ເລີ່ມແຕ່ປີ 1930 ແລະ ພາຍຫຼັງທີ່ໄດ້ສ້າງຕັ້ງອົງຄະນະພັກແຄວ້ນລາວ ເຮັດໃຫ້ການຕໍ່ສູ້ຂອງປະຊາຊົນລາວ ໄດ້ຮັບໄຊຊະນະຢ່າງຕໍ່ເນື່ອງຈົນສາມາດປະກາດເອກະລາດຕໍ່ຊາວໂລກໃນວັນທີ 12/10/1945. ໄດ້ທວນຄືນ ວັນສ້າງຕັ້ງການທູດລາວ, ປັດຈຸບັນ ພັກເຮົາໄດ້ມີການພົວພັນກັບພັກການເມືອງຂອງຕ່າງປະເທດ 141 ພັກ ແລະ ມີສາຍພົວພັນການທູດ ກັບ 150 ປະເທດ. ໃນໂອກາດນີ້, ຄຕພ ຍັງໄດ້ຈັດພິທີປະກາດພະນັກງານເຂົ້າຮັບອຸດໜູນ-ບໍານານ ຈໍານວນ 3 ສະຫາຍ ແລະ ປະກາດການຈັດຕັ້ງຂັ້ນຮອງຫົວໜ້າກົມ ຈໍານວນ 2 ສະຫາຍ.

**2) ຫົວໜ້າ ຄຕພ ຕ້ອນຮັບ ເອກອັກຄະລັດຖະທູດ ວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມ.**



ວັນທີ 3/10/2024, ຢູ່ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ(ຄຕພ) ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ສະຫາຍ ຫງວຽນ ມິງ ເຕິມ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ.ຫວຽດນາມ ຄົນໃໝ່ ປະຈຳ ສປປ ລາວ. ສອງຝ່າຍໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ສາຍພົວພັນສອງພັກ, ສອງລັດຜ່ານມາ ແລະ ຈະເຮັດສຸດຄວາມສາມາດຂອງຕົນໃນການເປັນເສນາທິການໃຫ້ແກ່ການນຳຂັ້ນສູງຂອງສອງພັກ, ສອງປະເທດ, ສືບຕໍ່ປະຕິບັດໜ້າທີ່ການເປັນຂົວເຊື່ອມມິດຕະພາບ ແລະ ໃນການເພີ່ມທະວີສາຍພົວພັນມິດຕະພາບ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ ແລະ ຫວຽດນາມ-ລາວ ໃຫ້ງອກງາມແຕກດອກອອກຜົນຍິ່ງໆຂຶ້ນ, ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ນັບມື້ນັບຫຼາຍຂຶ້ນ.

**3) ກອງເລຂາ ຄະນະຊີ້ນຳລະດັບຊາດ ການຈັດຕັ້ງປະຕິບັດແຜນແມ່ບົດ ການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ**




ວັນທີ 14/10/2024 ທີ່ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ), ກອງເລຂາຄະນະຊີ້ນຳລະດັບຊາດ ການຈັດຕັ້ງປະຕິບັດແຜນແມ່ບົດ ວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ໄດ້ຈັດກອງປະຊຸມປຶກສາຫາລືຂອງຕົນຂຶ້ນ ພາຍໃຕ້ການເປັນປະທານ ຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າ ຄຕພ, ຄະນະຊີ້ນຳລະດັບຊາດ, ທັງເປັນຫົວໜ້າກອງເລຂາ ຄະນະຊີ້ນຳລະດັບຊາດ ການຈັດຕັ້ງປະຕິບັດແຜນແມ່ບົດ ວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ 2024-2028. ກອງປະຊຸມໄດ້ຮັບຟັງການລາຍງານຄວາມຄືບໜ້າ, ການສະຫຼຸບຕີລາຄາ ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ໃນການ ຈັດຕັ້ງຜັນຂະຫຍາຍແຜນແມ່ບົດ ໃນໄລຍະຜ່ານມາ, ພ້ອມທັງໄດ້ປຶກສາຫາລືກ່ຽວກັບທິດທາງແຜນການຕໍ່ໜ້າ.

4) ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຢ້ຽມຢາມ ແລະ ເຮັດວຽກຢູ່ ສ.ຣັດເຊຍ



ວັນທີ 18/10/2024, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ຢ້ຽມຢາມ ແລະ ເຮັດວຽກທີ່ ນະຄອນຫລວງມົດສະກູ, ສະຫະພັນຣັດເຊຍ, ໄດ້ຕາງໜ້າລັດຖະບານແຫ່ງສປປ ລາວ ຈັດຕັ້ງພິທີປະດັບຫຼຽນໄຊມິດຕະພາບໃຫ້ ສະຫາຍ ເກນນາດີ ຊູການົບ, ປະທານຄະນະບໍລິຫານງານສູນກາງພັກກອມມູນິດສະຫະພັນຣັດເຊຍ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອລະຫວ່າງ ຣັດເຊຍ-ລາວ ກໍຄື ລະຫວ່າງ ພັກກອມມູນິດສະຫະພັນຣັດເຊຍ ແລະ ພັກປະຊາຊົນປະຕິວັດລາວ ໄລຍະຜ່ານມາ. ໂອກາດນີ້, ສະຫາຍ ທອງສະຫວັນ ພົມວິຫານ ພົບປະກັບ ສະຫາຍ ດີມິຕຼີ ໂນວິກົບ, ຮອງປະທານພັກກອມມູນິດສະຫະພັນຣັດເຊຍ, ຮອງປະທານກຳມາທິການຕ່າງປະເທດຂອງສະພາດູມາ ແຫ່ງສະຫະພັນຣັດເຊຍ, ສອງຝ່າຍຕີລາຄາສູງ ແລະ ສະເໜີໃຫ້ມີການເສີມຂະຫຍາຍການຮ່ວມມືດ້ານການໂຄສະນາຂໍ້ມູນຂ່າວສານຮ່ວມກັນ ຢ່າງຕັ້ງໜ້າໂດຍອີງໃສ່ທ່າແຮງຂອງສອງຝ່າຍ ເພື່ອເປັນການໂຄສະນາກ່ຽວກັບ ປະເທດລາວ ແລະ ພັກປະຊາຊົນ ປະຕິວັດລາວ, ເພື່ອເຮັດໃຫ້ຊາວຣັດເຊຍ ຮູ້ຈັກ ສປປ ລາວ ຫຼາຍຍິ່ງຂຶ້ນ ແລະ ທັງເປັນການສົ່ງເສີມດ້ານການທ່ອງທ່ຽວນຳກັນ.

5) ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຢ້ຽມຢາມ ແລະ ເຮັດວຽກຢູ່ ສ.ກາຊັກສະຖານ




ໃນລະຫວ່າງວັນທີ 15-17/10/2024, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າ ຄຕພ ພ້ອມດ້ວຍຄະນະ ໄດ້ຢ້ຽມຢາມ ແລະ ເຮັດວຽກ ທີ່ ສ.ກາຊັກສະຖານ ເພື່ອສ້າງຕັ້ງສາຍພົວພັນ ລະຫວ່າງ ພັກປະຊາຊົນປະຕິວັດລາວ ແລະ ພັກອາມານັດ (AMANAT), ໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມື ລະຫວ່າງ ສອງພັກ ກຳນົດ 5 ປີ ນັບແຕ່ປີ 2024 ເປັນຕົ້ນໄປ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ພົບປະກັບ ສະຫາຍ ກາຣິເບັກ ດາອູເລັດ (Karibek Daulet), ເລຂາທິການຜູ້ປະຈຳການພັກອາມານັດ ໂດຍມີຜູ້ຕາງໜ້າຈາກ ອົງການຈັດຕັ້ງແມ່ຍິງ ແລະ ຊາວໜຸ່ມ ແລະ ກະຊວງການຕ່າງປະເທດ ແຫ່ງສາທາລະນະລັດ ກາຊັກສະຖານເຂົ້າຮ່ວມ. ສອງຝ່າຍຕີລາຄາສູງມູນເຊື້ອແຫ່ງຮ່ວມມືລະຫວ່າງລາວ ແລະ ກາຊັກສະຖານ ນັບແຕ່ປີ 2018 ເປັນຕົ້ນມາ ກໍຄື ລະຫວ່າງ ສປປ ລາວ ແລະ ສະຫະພາບໂຊວຽດ ໃນເມື່ອກ່ອນ, ສືບຕໍ່ຮັດແໜ້ນ ແລະ ໃຫ້ການສະໜັບສະໜູນເຊິ່ງກັນ ແລະ ກັນ ໃນເວທີພາກພື້ນ ແລະ ສາກົນ, ການຢ້ຽມຢາມຄັ້ງນີ້ເປັນຄັ້ງທຳອິດ ແລະ ປະສົບຜົນສຳເລັດຕາມການຄາດໝາຍ, ຊຶ່ງຖືເປັນບາດກ້າວໃໝ່ຂອງການຮ່ວມມື ລະຫວ່າງ ພັກ ປປ ລາວ ແລະ ພັກອາມານັດ ກໍຄືການຊຸກຍູ້ ແລະ ເສີມສ້າງສາຍພົວພັນ ສປປ ລາວ ແລະ ສ.ກາຊັກສະຖານ.